ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------===000===-------

ຕະຫຼາດຫຼັກຊັບລາວ

ເລກທີ 145/ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ: 17/07/2013

# ແຈ້ງການ

## ການເພີ່ມອັດຕາສ່ວນການຖືຄອງຮຸ້ນ ຂອງນັກລົງທຶນຕ່າງປະເທດ ຂອງຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- ອີງຕາມມະຕິຂອງກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ລົງວັນທີ 16 ສິງຫາ 2012;
- ອີງຕາມຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ສະບັບເລກທີ 012/ຄລຕ ລົງວັນທີ 19 ພຶດສະພາ 2011;
- ອີງຕາມຂໍ້ຕົກລົງວ່າດ້ວຍການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ສະບັບເລກທີ 014/ຄລຕ ລົງວັນທີ 16 ກໍລະກົດ 2013;

ຕະຫຼາດຫຼັກຊັບລາວ ຂໍແຈ້ງການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດ ຂອງຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແມ່ນມີດັ່ງນີ້:

1. ນັກລົງທຶນຕ່າງປະເທດ ລວມກັນທັງໝົດ ສາມາດຖືຄອງຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ບໍ່ເກີນ 10% ຂອງຈຳນວນຮຸ້ນທັງໝົດ (ເພີ່ມຂຶ້ນຈາກ ທັງໝົດ 5% ມາເປັນ 10%).
2. ນັກລົງທຶນຕ່າງປະເທດ ໜຶ່ງລາຍ ສາມາດຖືຄອງຮຸ້ນໄດ້ບໍ່ເກີນ 1% ຂອງຈຳນວນຮຸ້ນທັງໝົດ (ອັດຕາສ່ວນສຳລັບນັກລົງທຶນຕ່າງປະເທດ ໜຶ່ງລາຍ ແມ່ນເທົ່າເດີມ ບໍ່ມີການປ່ຽນແປງ).

** ມີຜົນສັກສິດໃນການຈັດຕັ້ງປະຕິບັດ ເລີ່ມແຕ່ວັນທີ 18 ກໍລະກົດ 2013 (ວັນພະຫັດ) ເປັນຕົ້ນໄປ.

ດັ່ງນັ້ນ, ຕລຊລ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ແຈ້ງບັນດາລູກຄ້າໂດຍຜ່ານທາງເວັບໄຊຂອງທ່ານ ຫຼື ຜ່ານຊ່ອງທາງອື່ນທີ່ເຫັນວ່າເໝາະສົມ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

ຮອງປະທານ

ຮອງຜູ້ອຳນວຍການ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co., Ltd ນະຄອນຫລວງວຽງຈັນ

ໂຮຈອງ ປາກ